**ມິຊຊາອາທິດທີ 4 ກຳນົດປາສກາ ປີ A**

**ວັນທີ 3 ພຶດສະພາ 2020**



**ພຣະວໍລະສານໂດຍນັກບຸນຢວງ 10, 1-10**

ພຣະເຢຊູເຈົ້າຊົງກ່າວແກ່ພວກຟາຣີເຊວວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ຜູ້ໃດບໍ່ເຂົ້າຄອກແກະທາງປະຕູແຕ່ໄປເຂົ້າທາງອື່ນ, ຜູ້ນັ້ນແມ່ນຂະໂມຍ, ແມ່ນນັກປຸ້ນ. ສ່ວນຜູ້ທີ່ເຂົ້າທາງປະຕູແມ່ນນາຍຊຸມພາບານ. ຄົນເຝົ້າປະຕູກໍໄຂຮັບເພິ່ນ; ຝູງແກະຈື່ສຽງປາກຂອງເພິ່ນໄດ້; ເພິ່ນເອີ້ນຊື່ແກະໄດ້ແຕ່ລະໂຕ, ແລ້ວພາມັນອອກໄປນອກ. ເມື່ອແກະທັງໝົດອອກໄປແລ້ວ, ເພິ່ນກໍຍ່າງໄປໜ້າ, ແລ້ວໝູ່ແກະກໍຍ່າງຕາມຫລັງ, ຍ້ອນມັນຈື່ສຽງຂອງເພິ່ນ. ແຕ່ຫາກເປັນຄົນແປກໜ້າ, ຝູງແກະກໍບໍ່ໄປນຳ; ກົງກັນຂ້າມ ມັນຈະປົບໜີ, ຍ້ອນວ່າມັນບໍ່ຮູ້ຈັກສຽງປາກຂອງຄົນຕ່າງໜ້າ." ພຣະເຢຊູເຈົ້າກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງ, ແຕ່ພວກເຂົາບໍ່ເຂົ້າໃຈວ່າພຣະອົງຢາກເວົ້າຫຍັງ. ພຣະເຢຊູເຈົ້າຈຶ່ງຊ້ຳຄວາມອີກວ່າ: "ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ເຮົາແມ່ນປະຕູຄອກແກະ. ທຸກຄົນທີ່ມາກ່ອນເຮົາກໍເປັນຂະໂມຍແລະນັກປຸ້ນ ແລະແກະບໍ່ໄດ້ຟັງຄວາມພວກນັ້ນ. ເຮົາແມ່ນປະຕູ; ຜູ້ທີ່ເຂົ້າມາທາງເຮົາຈະເຂົ້າອອກໄດ້ຢ່າງປອດໄພແລະຈະໄດ້ພົບທົ່ງຫຍ້າ. ສ່ວນຂະໂມຍມາຫາແຕ່ລັກ, ຂ້າແລະທຳລາຍ. ສ່ວນເຮົາ, ເຮົາມາເພື່ອໃຫ້ແກະມີຊີວິດ ແລະມີຊີວິດຢ່າງອຸດົມສົມບູນ."

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 10, 1-10**

ວັນອາທິດນີ້ເປັນວັນທີ່ພຣະກຣິສຕະຈັກລະລຶກແລະພາວະນາເປັນພິເສດສຳລັບກະແສຮຽກການເປັນຜູ້ນຳປະຊາກອນຂອງພຣະເຈົ້າຄື: ພຣະສັງຄະລາດ, ພຣະສົງ, ນັກບວດຊາຍຍິງ. ດັ່ງນັ້ນ, ພຣະກຣິສຕະຈັກຈຶ່ງໃຫ້ພວກເຮົາໄດ້ຟັງບົດອ່ານແລະພຣະວໍລະສານໂດຍນັກບຸນຍວງທີ່ກ່າວເຖິງນາຍຊຸມພະບານທີ່ດີ.

ເມື່ອກ່າວເຖິງຄວາມປຽບທຽບເລື່ອງນາຍຊຸມພະບານທີ່ດີ ແນ່ນອນພວກເຮົາທຸກຄົນລ້ວນແຕ່ເຄີຍໄດ້ຟັງແລະຮູ້ຈັກດີວ່າຜູ້ທີ່ເປັນນາຍຊຸມພະບານທີ່ດີແທ້ຈິງແລະເປັນປະຕູຄອກແກະນັ້ນແມ່ນພຣະເຢຊູເຈົ້າ. ແລະພວກເຮົາຜູ້ທີ່ເຊື່ອແລະຟັງສຽງຂອງພຣະອົງ ພວກເຮົາກໍເປັນຝູງແກະຂອງພຣະອົງ. ແຕ່ພວກເຮົາລືມໄປຢ່າງໜຶ່ງວ່າພຣະເຢຊູເຈົ້າບໍ່ພຽງແຕ່ເປັນນາຍຊຸມພະບານທີ່ດີແລະເປັນປະຕູຄອກແກະເທົ່ານັ້ນ, ແຕ່ພຣະອົງຍັງເປັນຜູ້ທີ່ເດີນເຂົ້າທາງປະຕູຄອກແກະຜູ້ທຳອິດອີກດ້ວຍ. ໝາຍຄວາມວ່າແນວໃດ? ເພື່ອຈະເຂົ້າໃຈຄວາມໝາຍນີ້ໄດ້ ພວກເຮົາຕ້ອງເລີ່ມເຂົ້າໃຈຄວາມໝາຍຂອງຄຳວ່າປະຕູຄອກແກະ.ປະຕູເປັນສິ່ງທີ່ທຳໃຫ້ພວກເຮົາຂ້າມຜ່ານຈາກສະຖານທີ່ໜຶ່ງໄປຫາສະຖານທີ່ອື່ນ. ຫລືເວົ້າອີກຢ່າງ, ປະຕູຄອກແກະຂອງພຣະເຢຊູເຈົ້າທຳໃຫ້ພວກເຮົາຂ້າມຜ່ານຈາກການເປັນຂ້ອຍທາດຂອງບາບໄປສູ່ເສລີພາບແຫ່ງການເປັນລູກຂອງພຣະບິດາເຈົ້າ, ຈາກຄວາມຕາຍໄປສູ່ຊີວິດ. ແລະທ້າຍສຸດແມ່ນການຈາກໂລກນີ້ເມືອຫາພຣະບິດາເຈົ້າສະຫວັນ. ຜູ້ທີ່ເດີນຜ່ານປະຕູຄອກແກະນີ້ໄດ້ຕ້ອງເປັນຜູ້ທີ່ຮູ້ຈັກສຽງນາຍຊຸມພະບານ. ເປັນຫຍັງພຣະເຢຊູເຈົ້າຈຶ່ງເປັນຜູ້ທຳອິດທີ່ເດີນຜ່ານປະຕູຄອກແກະນີ້? ຍ້ອນພຣະອົງເປັນພຣະເຈົ້າແທ້ແລະກໍເປັນມະນຸດແທ້ເໝືອນກັບພວກເຮົານີ້ດ້ວຍ. ຍົກເວັ້ນແຕ່ບາບ. ພຣະເຢຊູເຈົ້າເອງກໍໄດ້ຂ້າມຜ່ານຄວາມຕາຍໄປສູ່ຊີວິດ. ພຣະອົງເປັນຜູ້ທຳອິດທີ່ໄດ້ກັບເປັນຄືນມາຈາກຄວາມຕາຍຊຶ່ງພວກເຮົາຮຽກວ່າ: "ວັນປາສກາ". ພຣະອົງກໍໄດ້ຈາກໂລກນີ້ເມືອຫາພຣະບິດາເຈົ້າຊຶ່ງພວກເຮົາຮຽກວ່າ: "ວັນພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ". ແລະພຣະເຢຊູເຈົ້າກໍໄດ້ຟັງສຽງຂອງນາຍຊຸມພະບານຂອງພຣະອົງຄືສຽງຂອງພຣະບິດາເຈົ້າ. ເພາະພຣະອົງກ່າວວ່າ: "ອາຫານຂອງເຮົາຄືການທຳຕາມນ້ຳພຣະໄທຂອງພຣະບິດາເຈົ້າ" (ຢງ 4, 34). ວາຈາພຣະເຈົ້າວັນນີ້ທຳໃຫ້ພວກເຮົາເຂົ້າໃຈວ່າພຣະເຢຊູເຈົ້າຜູ້ທີ່ພວກເຮົາເຊື່ອແລະສະຫລອງການກັບເປັນຄືນມານີ້, ພຣະອົງເປັນທັງນາຍຊຸມພະບານທີ່ດີ, ເປັນທັງປະຕູຄອກແກະແລະພຣະອົງກໍເປັນແກະເໝືອນກັບພວກເຮົາ. ແຕ່ສິ່ງທີ່ພຣະເຢຊູເຈົ້າແຕກຕ່າງຈາກພວກເຮົາຄືພຣະອົງບໍ່ກະທຳບາບ. ເພາະພຣະອົງທຳແຕ່ນ້ຳພຣະໄທຂອງພຣະບິດາເຈົ້າເທົ່ານັ້ນ.

ສ່ວນພວກເຮົານີ້ເດ, ພວກເຮົາຜູ້ເປັນລູກແກະຂອງພຣະເຢຊູເຈົ້າ ພວກເຮົາໄດ້ຟັງສຽງຂອງພຣະອົງບໍ? ພວກເຮົາໄດ້ເດີນຕາມພຣະອົງບໍ? ພວກເຮົາໄດ້ທຳຕາມນ້ຳພຣະໄທຂອງພຣະອົງບໍ?

ຂໍໃຫ້ວັນທີ່ພຣະກຣິສຕະຈັກພາວະນາໃຫ້ກັບກະແສຮຽກການເປັນຜູ້ນຳໃນພຣະກຣິສຕະຈັກນີ້ຊ່ວຍພວກເຮົາໃຫ້ສາມາດຟັງສຽງຮຽກເອີ້ນຂອງພຣະເຢຊູເຈົ້າ ແລະເດີນຕາມພຣະອົງໄປເພື່ອຈະໄດ້ເປັນເໝືອນພຣະອົງຄືການເປັນຜູ້ນຳຄົນອື່ນໄປຫາພຣະເຈົ້າຜູ້ເປັນບໍ່ເກີດແຫ່ງຊີວິດນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ